ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານສະຖານທີ່ກັກກັນສັດ ເພື່ອການນຳເຂົ້າ-ສົ່ງອອກ ສັດ ປະເພດ ງົວ, ຄວາຍ, ແກະ, ແບ້ ຂອງ ສປປ ລາວ

**ລະຫັດມາດຕະຖານ : ມກປ-ລປ-2018-00001**
**STDCODE : AFSTD-LF-2018-00001**

**ວຽງຈັນ, 2018**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານສະຖານທີ່ກັກກັນສັດ ເພື່ອການນຳເຂົ້າ-ສົ່ງອອກສັດ ປະເພດ ງົວ, ຄວາຍ, ແກະ, ແບ້ ຂອງ ສປປ ລາວ

| | | |
|---|---|---|
| ລະຫັດມາດຕະຖານ | : | ມກປ.ລປ.2018.00001 |
| **STDCODE** | : | **AFSTD-LF-2018-00001** |

ອົງການສ້າງມາດຕະຖານ:

ກົມລ້ຽງສັດ ແລະ ການປະມົງ

ຖະໜົນ ສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ.

ນະຄອນຫຼວງວຽງຈັນ, ສປປ ລາວ, ຕປນ. 6644

ເບີໂທລະສັບ: +856 21 215242-3

ເບີໂທລະສານ:+856 21 215141

ເວບໄຊທ: http://dlf.maf.gov.la

ວຽງຈັນ, **2018**

# ສາລະບານ


| | | ໜ້າ |
|---|---|---|
| | ຄຳນຳ | 1. |
| 1 | ຈຸດປະສົງ | 2 |
| 2 | ຂອບເຂດການນຳໃຊ້ | 2 |
| 3 | ທີ່ຕັ້ງຂອງສະຖານທີ່ກັກກັນສັດ | 2 |
| 4 | ເງື່ອນໄຂກ່ຽວກັບ ສິ່ງປຸກສ້າງ ແລະ ສິ່ງອຳນວຍຄວາມສະດວກ | 2 |
| 5 | ສິ່ງອຳນວຍຄວາມສະດວກອື່ນ | 3 |
| 6 | ລະບຽບການ ແລະ ມາດຕະການທີ່ນຳໃຊ້ຢູ່ສະຖານທີ່ກັກກັນສັດ | 4 |

# ຄຳນຳ

ໂດຍອີງຕາມກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ແລະ ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມລ້ຽງສັດ ແລະ ການປະມົງ ເລກທີ 3824/ກປ ລົງວັນທີ 18 ສິງຫາ 2017, ກົມລ້ຽງສັດ ແລະ ການປະມົງ ໄດ້ສ້າງມາດຕະຖານສະຖານທີ່ກັກກັນສັດ ເພື່ອການນຳເຂົ້າ-ສົ່ງອອກ ສັດ ປະເພດ ງົວ, ຄວາຍ, ແກະ ແລະ ແບ້ ຂອງ ສປປ ລາວ ນີ້ຂຶ້ນ ໂດຍມີເປົ້າໝາຍ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດໃຫ້ເປັນອັນລະອຽດ ແລະ ໃຫ້ເປັນຂໍ້ແນະນຳການປະຕິບັດໃຫ້ແກ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃນການຄວບຄຸມການເຄື່ອນຍ້າຍສັດຢູ່ໃນ ສປປ ລາວ.

ເອກະສານນີ້ ໄດ້ກວມເອົາ ບັນດາຂໍ້ກຳນົດທີ່ເປັນມາດຕະຖານລວມ ສຳລັບ ສະຖານທີ່ຕັ້ງ, ເງື່ອນໄຂກ່ຽວກັບ ສິ່ງປຸກສ້າງ ແລະ ສິ່ງອຳນວຍຄວາມສະດວກ, ອົງປະກອບຂອງສະຖານທີ່ກັກກັນ, ຮົ້ວ ແລະ ທາງຖະໜົນ, ຫ້ອງອາບ, ຫ້ອງສຸຂາ ແລະ ບ່ອນປ່ຽນຖ່າຍເຄື່ອງນຸ່ງສ່ວນບຸກຄົນ, ບ່ອນເກັບ ແລະ ທຳລາຍຂີ້ເຫຍື້ອ-ສິ່ງເສດເຫຼືອ, ເຄື່ອງມື-ອຸປະກອນ, ລະບົບພື້ນຖານໂຄງລ່າງ ແລະ ມາດຕະການທີ່ນຳໃຊ້ຢູ່ສະຖານທີ່ກັກກັນສັດ.

ກົມລ້ຽງສັດ ແລະ ການປະມົງ ຂໍຖືເປັນກຽດແຈ້ງວ່າ ມາດຕະຖານສະບັບນີ້ ແມ່ນສ້າງຂຶ້ນບົນພື້ນຖານທີ່ໄດ້ຜ່ານການປຶກສາຫາລືຢ່າງກວ້າງຂວາງຈາກຜູ້ຊ່ຽວຊານ ແລະ ຄະນະກຳມະການຄົ້ນຄວ້າ ນະໂຍບາຍ ແລະ ນິຕິກຳຂອງກົມລ້ຽງສັດ ແລະ ການປະມົງ ແລະ ຫວັງວ່າ ຈະໃຫ້ເປັນເຄື່ອງມື ໃນການກວດກາ, ກັກກັນ ແລະ ອອກໃບຢັ້ງຢືນດ້ານສຸຂະພາບສັດ ໃຫ້ໄດ້ຕາມມາດຕະຖານຂອງສາກົນ ເພື່ອປະກອບສ່ວນເຂົ້າໃນການສົ່ງເສີມການຜະລິດສັດໃຫ້ເປັນສິນຄ້າແຂ່ງຂັນດ້ານການຄ້າກັບບັນດາປະເທດໃນ ພາກພື້ນ, ຂົງເຂດ ແລະ ສາກົນ ໃຫ້ສູງຂຶ້ນເທື່ອລະກ້າວ.

ມາດຕະຖານສະບັບນີ້ ແມ່ນອອກປ່ຽນແທນມາດຕະຖານເລກທີ 2218/ກລປ, ລົງວັນທີ 02 ຕຸລາ 2017.

ອອກທີ່: ນະຄອນຫຼວງວຽງຈັນ, ວັນທີ: 17 JUL 2018

ອອກໂດຍ: ຫົວໜ້າກົມລ້ຽງສັດ ແລະ ການປະມົງ

ສົມພັນ ຈັນເພັງໄຊ

# ມາດຕະຖານສະຖານທີ່ກັກກັນສັດ
# ເພື່ອການນຳເຂົ້າ-ສົ່ງອອກສັດ ປະເພດ ງົວ, ຄວາຍ, ແກະ, ແບ້ ຂອງ ສປປ ລາວ

## 1. ຈຸດປະສົງ

ມາດຕະຖານສະບັບນີ້ ສ້າງຂຶ້ນ ໂດຍມີຈຸດປະສົງ ກຳນົດເງື່ອນໄຂຂອງການສ້າງຕັ້ງສະຖານທີ່ກັກກັນສັດ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບການລ້ຽງສັດ ແລະ ສັດຕະວະແພດ ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານຂອງອົງການສຸຂະພາບສັດສາກົນກຳນົດ ແນໃສ່ ຄວບຄຸມການນຳສັດມີຊີວິດ ແລະ ຊີ້ນສ່ວນສັດ ເຂົ້າ-ອອກ ສປປ ລາວ ໃຫ້ມີຄວາມປອດໄພ, ສະກັດກັ້ນ ການນຳເຂົ້າ, ກໍ່ຕົວ, ແຜ່ກະຈາຍ ແລະ ການລະບາດຂອງພະຍາດສັດຕ່າງຖິ່ນ ບໍ່ໃຫ້ເກີດຜົນກະທົບຕໍ່ຊີວິດ, ຊັບສິນ, ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມຂອງ ສປປ ລາວ.

## 2. ຂອບເຂດການນຳໃຊ້

ມາດຕະຖານສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການນຳສັດມີຊີວິດ, ຜະລິດຕະພັນສັດ ແລະ ຊີ້ນສ່ວນສັດ ເຂົ້າ-ອອກ ສປປ ລາວ.

## 3. ທີ່ຕັ້ງຂອງສະຖານທີ່ກັກກັນສັດ

ສະຖານທີ່ກັກກັນສັດຕ້ອງຕັ້ງຢູ່ບ່ອນທີ່ມີສະພາບແວດລ້ອມເໝາະສົມ ບໍ່ໄກຈາກດ່ານຊາຍແດນ ຂອງ ສປປ ລາວ ຫຼື ບໍ່ໄກຈາກສະໜາມບິນທ່າເຮືອ, ສະຖານີຂົນສົ່ງ ເກີນກວ່າ 200 ກິໂລແມັດ ໂດຍຕ້ອງໃຫ້ມີເສັ້ນທາງຄົມມະນາຄົມ ທີ່ສາມາດຂົນສົ່ງສັດມີຊີວິດໄດ້ຢ່າງສະດວກ ແລະ ມີພື້ນທີ່ພຽງພໍສຳລັບການນຳເອົາສັດຂຶ້ນລົງພາຫານະ.

## 4. ເງື່ອນໄຂກ່ຽວກັບ ສິ່ງປຸກສ້າງ ແລະ ສິ່ງອຳນວຍຄວາມສະດວກ

### 4.1 ອົງປະກອບຂອງສະຖານທີ່ກັກກັນ, ຮົ້ວ ແລະ ທາງຖະໜົນ

#### 4.1.1 ອົງປະກອບຂອງສະຖານທີ່ກັກກັນ

ສະຖານທີ່ກັກກັນສັດ ຕ້ອງມີການອອກແບບໃຫ້ມີອົງປະກອບຄົບຖ້ວນ ໂດຍຕ້ອງຈັດແບ່ງເຂດໃຫ້ເໝາະສົມກັບການໃຊ້ສອຍ ແລະ ບໍລິການ ຊຶ່ງພື້ນຖານ ຕ້ອງມີ: ເຂດ ຫ້ອງການ, ທີ່ພັກອາໄສພະນັກງານ ແລະ ຄອກກັກກັນສັດ ໂດຍໃຫ້ແຍກອອກຈາກກັນຢ່າງຊັດເຈນ. ໃນເຂດຄອກກັກກັນສັດ ຕ້ອງປະກອບໃຫ້ມີ ດັ່ງນີ້:

4.1.1.1 ຄອກກັກກັນສັດ;

4.1.1.2 ອຸປະກອນໃຫ້ນໍ້າ ແລະ ອາຫານສັດ;

4.1.1.3 ຄອກແຍກກັກສັດເຈັບປ່ວຍ;

4.1.1.4 ສາງເກັບຮັກສາວັດຖຸອຸປະກອນ, ອາຫານສັດເຂັ້ມຂຸ້ນ ແລະ ອາຫານຫຍາບ ແຍກຈາກກັນ;

4.1.1.5 ບ່ອນເກັບ ແລະ ບຳບັດສິ່ງເສດເຫຼືອ;

4.1.1.6 ທີ່ພັກຂອງພະນັກງານກັກກັນ ແລະ ພະນັກງານລ້ຽງສັດ;

4.1.1.7 ຫ້ອງການ ແລະ ສະຖານທີ່ປະຕິບັດງານ;

4.1.1.8 ມີອຸປະກອນທີ່ນຳໃຊ້ສຳລັບການຂ້າເຊື້ອພະຍາດຢູ່ລະຫວ່າງແຕ່ລະເຂດ;

4.1.1.9 ມີວັດຖຸ ອຸປະກອນອື່ນ ຕາມຄວາມຈຳເປັນ.

4.1.2. ຮົ້ວ

4.1.2.1 ຮົ້ວພາຍນອກ ຕ້ອງເປັນຮົ້ວຖາວອນ ທີ່ມີຄວາມສູງ ບໍ່ຕ່ຳກວ່າ 2 ແມັດ ໂດຍໃຫ້ລ້ອມຮອບສະຖານທີ່ກັກກັນສັດ ແລະ ຫ້ອງການ ໃຫ້ແຍກອອກຈາກສະພາບແວດລ້ອມພາຍນອກຢ່າງຊັດເຈນ;

4.1.2.2 ຮົ້ວພາຍໃນ ຕ້ອງເປັນຮົ້ວແຂງແຮງຖາວອນ ທີ່ມີຄວາມສູງບໍ່ຕ່ຳກວ່າ 1,65 ແມັດ ໂດຍຕ້ອງຮົ້ວແຍກກັນແຕ່ລະເຂດຢູ່ພາຍໃນໃຫ້ຊັດເຈນ.

4.1.3. ທາງຖະໜົນ

4.1.3.1. ສະຖານທີ່ກັກກັນສັດ ຕ້ອງມີທາງຖະໜົນຢ່າງສະດວກ ໂດຍໃຫ້ມີທາງທຽວແຍກກັນຢ່າງຂາດຕົວລະຫວ່າງທາງທຽວຂອງຄົນ ແລະ ທາງທຽວຂອງພາຫານະ ພ້ອມທັງໃຫ້ມີອຸປະກອນຂ້າເຊື້ອພາຫານະຢູ່ແລວຮົ້ວພາຍນອກ ແລະ ຮົ້ວພາຍໃນຢ່າງຮັບປະກັນ;

4.1.3.2. ປະຕູທາງເຂົ້າເຂດຄອກກັກກັນແຕ່ລະບ່ອນ ຕ້ອງມີອ່າງຂ້າເຊື້ອ ໂດຍໃຫ້ມີຄວາມກວ້າງເທົ່າກັບຄວາມກວ້າງຂອງປະຕູ ແລະ ຄວາມກວ້າງຂອງເສັ້ນທາງ ຊຶ່ງໂດຍທົ່ວໄປແລ້ວແມ່ນບໍ່ໃຫ້ຫລຸດ 4 ແມັດ ແລະ ໃຫ້ມີຄວາມເລິກ 30 ຊັງຕີແມັດ. ພ້ອມນີ້ຢູ່ຕາມເສັ້ນທາງນ້ອຍພາຍໃນ ຫຼື ຢູ່ປະຕູທີ່ເປັນບ່ອນທາງຍ່າງຂອງພະນັກງານຕ້ອງມີອ່າງຂ້າເຊື້ອເກີບ ແລະ ອ່າງລ້າງມື.

4.1.4. ຫ້ອງອາບ, ຫ້ອງສຸຂາ ແລະ ບ່ອນປ່ຽນຖ່າຍເຄື່ອງນຸ່ງສ່ວນບຸກຄົນ

ໃນເຂດທາງເຂົ້າບໍລິເວນຄອກກັກກັນ ຕ້ອງມີຫ້ອງອາບນ້ຳ, ຫ້ອງສຸຂາ ແລະ ບ່ອນຖ່າຍເຄື່ອງນຸ່ງເປັນການສະເພາະ ແລະ ຕ້ອງມີບ່ອນໃສ່ເກີບ ແລະ ໝວກ. ຫ້ອງອາບນ້ຳ ແລະ ຫ້ອງສຸຂາ ຕ້ອງສ້າງໃຫ້ໄດ້ຕາມມາດຕະຖານຂອງຫ້ອງນ້ຳສ່ວນຕົວ. ຕູ້ເກັບມ້ຽນເຄື່ອງສ່ວນຕົວຕ້ອງສາມາດລອກກະແຈໄດ້ ແລະ ຄວນມີເຄື່ອງໃຫ້ຄວາມຮ້ອນ ພ້ອມທັງລະບົບດອກໄຟຟ້າຂ້າເຊື້ອ ຫຼື ມີເຄື່ອງມືອື່ນທີ່ສາມາດຂ້າເຊື້ອພະຍາດໄດ້.

4.1.5. ບ່ອນເກັບ ແລະ ທຳລາຍຂີ້ເຫຍື້ອ-ສິ່ງເສດເຫຼືອ

ຕ້ອງມີບ່ອນເກັບຂີ້ເຫຍື້ອເປັນຈຸດລວມສູນຢູ່ບ່ອນດຽວແຍກຕ່າງຫາກ. ພາຍຫຼັງທີ່ກັກກັນສັດແລ້ວ ຕ້ອງໃຫ້ສາມາດຂ້າເຊື້ອກ່ອນທີ່ຈະລຳລຽງຂີ້ເຫຍື້ອອອກຈາກສະຖານທີ່ກັກກັນສັດ.

4.1.6. ຫໍຄອຍ ຫຼື ປ່ອງຢ້ຽມທີ່ສາມາດເບິ່ງຮອດຄອກກັກກັນສັດ

ສະຖານທີ່ກັກກັນສັດ ຄວນສ້າງຫໍຄອຍ ຫຼື ສ້າງໃຫ້ມີປ່ອງຢ້ຽມຢູ່ຫໍພັກ ທີ່ສາມາດເບິ່ງເຫັນຮອດບໍລິເວນອ້ອມຮອບຄອກກັກກັນໄດ້.

## 5. ສິ່ງອຳນວຍຄວາມສະດວກອື່ນ

ສະຖານທີ່ກັກກັນສັດ ຕ້ອງປະກອບດ້ວຍສິ່ງອຳນວຍຄວາມສະດວກອື່ນອີກ ດັ່ງນີ້:

5.1 ເຄື່ອງມື-ອຸປະກອນໃຫ້ຄວາມຮ້ອນ ແລະ ຄວາມເຢັນ;

5.2 ເຄື່ອງມື ປ້ອງກັນອັກຄີໄພ;

5.3 ລະບົບໄຟຟ້າ ແລະ ຈັກໄຟຟ້າສຳຮອງ;

5.4 ລະບົບສະໜອງນ້ຳ ແລະ ອ່າງເກັບນ້ຳສຳຮອງ;

5.5 ເຄື່ອງພົ່ນຢາຂ້າເຊື້ອທີ່ເຄື່ອນທີ່ໄດ້;

5.6 ພາຫານະຂົນສົ່ງວັດຖຸອຸປະກອນ;

5.7 ລະບົບກ້ອງວົງຈອນປິດ;

5.8 ສິ່ງອຳນວຍຄວາມສະດວກເພີ່ມເຕີມອື່ນ ເປັນຕົ້ນ ເຄື່ອງມືສື່ສານ, ເຄື່ອງໃຊ້ສຳລັບບຳລຸງຮັກສາ ແລະ ອື່ນໆ ຕາມຄວາມຈຳເປັນ ໃນແຕ່ລະໄລຍະ.

6. ລະບຽບການ ແລະ ມາດຕະການທີ່ນຳໃຊ້ຢູ່ສະຖານທີ່ກັກກັນສັດ

ສະຖານທີ່ກັກກັນສັດ ຕ້ອງມີລະບຽບ ແລະ ມາດຕະການປະຕິບັດ ດັ່ງນີ້:

6.1 ມີບຸກຄະລາກອນ ທີ່ມີສຸຂະພາບແຂງແຮງ, ມີຄວາມຮູ້, ຄວາມສາມາດ ແລະ ມີແຜນການກວດສຸຂະພາບ ພ້ອມທັງການຈັດຝຶກອົບຮົມ ທີ່ດີ;

6.2 ມີລະບົບການປ້ອງກັນ ແລະ ຂ້າເຊື້ອພະຍາດທີ່ສົມບູນ;

6.3 ມີລະບົບບັນທຶກການເຂົ້າ-ອອກ ຂອງພະນັກງານ, ພາຫານະ ແລະ ວັດຖຸສິ່ງຂອງທີ່ເຂັ້ມງວດ;

6.4 ມີລະບົບຄຸ້ມຄອງສັດ ແລະ ເຮັດທະບຽນພິມສັດ ທີ່ສອດຄ່ອງກັບລະບົບຂອງ ສປປ ລາວ;

6.5 ມີລະບົບຈັດການຄຸ້ມຄອງອາຫານສັດ ແລະ ນ້ຳ ທີ່ດີ;

6.6 ມີລະບົບອຳນວຍຄວາມສະດວກໃຫ້ແກ່ການກວດສຸຂະພາບສັດຢູ່ຄອກກັກກັນສັດ ຂອງເຈົ້າໜ້າທີ່ຂອງລັດ ຫຼື ພະນັກງານທີ່ຖືກມອບໝາຍ;

6.7 ມີລະບົບປ້ອງກັນອັກຄີໄພ ແລະ ຄວາມປອດໄພ ທີ່ຮັບປະກັນ;

6.8 ມີລະບົບປ້ອງກັນຄວາມປອດໄພທາງດ້ານຊີວະພາບທີ່ດີ;

6.9 ສາມາດເຂົ້າເຖິງການວິໄຈພະຍາດ ແລະ ມີລະບົບປະສານງານກັບພາກລັດໃນການປະຕິບັດມາດຕະການດ້ານ ວິຊາການ ແລະ ການອອກໃບຢັ້ງຢືນ;

6.10 ມີລະບຽບ, ຄູ່ມື, ມາດຕະຖານປະຕິບັດງານ ແລະ ລະບຽບການອື່ນ ຕາມທີ່ ປະເທດນຳເຂົ້າ ຫຼື ສົ່ງອອກ ຮຽກຮ້ອງ.

----------------------------------------ກລປ----------------------------------------